ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 03 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 02 ມັງກອນ 2018

# ຂໍ້ຕົກລົງ
# ວ່າດ້ວຍການເຂົ້າຫາຂໍ້ມູນຂ່າວສານສິນເຊື່ອ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມ ດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການເຄື່ອນໄຫວຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 928/ທຫລ, ລົງວັນທີ 20 ກັນຍາ 2012;
- ອີງຕາມ ການສະເໜີຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການຄຸ້ມຄອງ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການສະໜອງຂໍ້ມູນຂ່າວສານສິນເຊື່ອ ເພື່ອໃຫ້ຜູ້ຊົມໃຊ້ເຂົ້າຫາຂໍ້ມູນຂ່າວສານສິນເຊື່ອ ໄດ້ເປັນລະບົບ, ມີຄວາມສະດວກ ແລະ ວ່ອງໄວ.

**ມາດຕາ 2 ການເຂົ້າຫາຂໍ້ມູນຂ່າວສານສິນເຊື່ອ**

ການເຂົ້າຫາຂໍ້ມູນຂ່າວສານສິນເຊື່ອ ແມ່ນການໃຫ້ບໍລິການຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ດ້ວຍການຄົ້ນຫາ ຫຼື ການສະໜອງຂໍ້ມູນໂດຍກົງຂອງສູນຂໍ້ມູນຂ່າວສານສິນເຊື່ອ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຂໍ້ມູນຂ່າວສານສິນເຊື່ອ** ໝາຍເຖິງ ຂໍ້ມູນສິນເຊື່ອ ແລະ ຂໍ້ມູນອື່ນ ທີ່ກ່ຽວຂ້ອງກັບການກູ້ຢືມ;

2. **ສະມາຊິກ** ໝາຍເຖິງ ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ ຊຶ່ງເປັນສະມາຊິກຂອງສູນຂໍ້ມູນຂ່າວສານສິນເຊື່ອ;

3. **ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ** ໝາຍເຖິງ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ບໍລິສັດເຊົ່າສິນເຊື່ອ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຈາກທະນາຄານແຫ່ງ ສປປ ລາວ;

4. **ເຈົ້າຂອງຂໍ້ມູນ** ໝາຍເຖິງ ຜູ້ກູ້ຢືມ ທີ່ມີຂໍ້ມູນເກັບຮັກສາໃນລະບົບລາຍງານຂໍ້ມູນຂ່າວສານສິນເຊື່ອ;

5. **ຜູ້ທີ່ບໍ່ແມ່ນເຈົ້າຂອງຂໍ້ມູນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຕ້ອງການນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ ຂອງຜູ້ກູ້ຢືມ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບັນດາກົມຂອງທະນາຄານແຫ່ງ ສປປ ລາວ, ສະມາຊິກ, ເຈົ້າຂອງຂໍ້ມູນ ແລະ ຜູ້ທີ່ບໍ່ແມ່ນເຈົ້າຂອງຂໍ້ມູນ ຊຶ່ງເຄື່ອນໄຫວພົວພັນກັບການເຂົ້າຫາຂໍ້ມູນຂ່າວສານສິນເຊື່ອ.

## ໝວດທີ 2
## ການເຂົ້າຫາຂໍ້ມູນຂ່າວສານສິນເຊື່ອ

**ມາດຕາ 5 ວິທີການເຂົ້າຫາຂໍ້ມູນຂ່າວສານສິນເຊື່ອ**

ສະມາຊິກ, ເຈົ້າຂອງຂໍ້ມູນ ແລະ ຜູ້ທີ່ບໍ່ແມ່ນເຈົ້າຂອງຂໍ້ມູນ ສາມາດເຂົ້າຫາຂໍ້ມູນຂ່າວສານສິນເຊື່ອ ດ້ວຍວິທີການ ດັ່ງນີ້:

1. ສະມາຊິກ ທີ່ມີຄວາມຕ້ອງການຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ສາມາດເຂົ້າຄົ້ນຫາດ້ວຍຕົນເອງ ໂດຍພິມຊື່ ແລະ ລະຫັດຜ່ານ ທີ່ສູນຂໍ້ມູນຂ່າວສານສິນເຊື່ອກຳນົດໃຫ້ໃນເວລາເຂົ້າເປັນສະມາຊິກ ເພື່ອເຂົ້າໃນລະບົບຂໍ້ມູນຂ່າວສານສິນເຊື່ອ ເສຍກ່ອນ. ພາຍຫຼັງທີ່ສາມາດເຂົ້າໄປໃນລະບົບດັ່ງກ່າວແລ້ວ ກໍພິມຂໍ້ມູນຜູ້ສະເໜີຂໍກູ້ຢືມໃສ່ ເພື່ອຄົ້ນຫາ;

2. ເຈົ້າຂອງຂໍ້ມູນ ຫຼື ຜູ້ທີ່ບໍ່ແມ່ນເຈົ້າຂອງຂໍ້ມູນ ທີ່ມີຄວາມຕ້ອງການຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ສາມາດສະເໜີຂໍຂໍ້ມູນຢ່າງເປັນລາຍລັກອັກສອນ ນຳສູນຂໍ້ມູນຂ່າວສານສິນເຊື່ອ ຊຶ່ງຜູ້ທີ່ບໍ່ແມ່ນເຈົ້າຂອງຂໍ້ມູນຕ້ອງມີໃບຍິນຍອມໃຫ້ສະໜອງຂໍ້ມູນຈາກເຈົ້າຂອງຂໍ້ມູນ ປະກອບມາພ້ອມ. ພາຍຫຼັງໄດ້ຮັບໜັງສືສະເໜີ ແລະເອກະສານປະກອບຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ສູນຂໍ້ມູນຂ່າວສານສິນເຊື່ອ ຈະສະໜອງຂໍ້ມູນດັ່ງກ່າວໃຫ້ແກ່ຜູ້ສະເໜີ ພາຍໃນ 3 ວັນລັດຖະການ. ໃນກໍລະນີທີ່ບໍ່ພົບເຫັນຂໍ້ມູນ ກໍຈະແຈ້ງປະຕິເສດການສະໜອງຂໍ້ມູນພາຍໃນກຳນົດເວລາດັ່ງກ່າວ.

**ມາດຕາ 6 ຄ່າສະໝັກເຂົ້າເປັນສະມາຊິກ**

ທະນາຄານທຸລະກິດ ຫຼື ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ ທີ່ໄດ້ຮັບໃບອະນຸຍາດເຂົ້າເປັນສະມາຊິກ ຂອງສູນຂໍ້ມູນຂ່າວສານສິນເຊື່ອ ຕ້ອງເສຍຄ່າສະໝັກເຂົ້າເປັນສະມາຊິກ ດັ່ງນີ້:

1. ທະນາຄານທຸລະກິດ: 4.000.000 (ສີ່ລ້ານ) ກີບ;

2. ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ ແມ່ນປະຕິບັດຕາມປະເພດທຸລະກິດ ດັ່ງນີ້:

- ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ບໍລິສັດເຊົ່າສິນເຊື່ອ: 1.500.000 (ໜຶ່ງລ້ານຫ້າແສນ) ກີບ;
- ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ: 1.000.000 (ໜຶ່ງລ້ານ) ກີບ;

ຄ່າສະໝັກເຂົ້າເປັນສະມາຊິກ ມີການປ່ຽນແປງຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 7 ຄ່າເຂົ້າຄົ້ນຫາ ແລະ ຄ່າສະໜອງ ຂໍ້ມູນ**

ສະມາຊິກ ທີ່ເຂົ້າຄົ້ນຫາຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຕາມມາດຕາ 5, ຂໍ້ 1 ຂອງຂໍ້ຕົກລົງສະບັບນີ້ ຕ້ອງເສຍຄ່າເຂົ້າຄົ້ນຫາຂໍ້ມູນ ເຖິງວ່າຈະພົບ ຫຼື ບໍ່ພົບຂໍ້ມູນກໍຕາມ. ຄ່າເຂົ້າຄົ້ນຫາຂໍ້ມູນ ມີດັ່ງນີ້:

1. ທະນາຄານທຸລະກິດ: 20.000 (ຊາວພັນ) ກີບ ຕໍ່ຄັ້ງຕໍ່ຂໍ້ມູນ;

2. ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ: 10.000 (ສິບພັນ) ກີບ ຕໍ່ຄັ້ງຕໍ່ຂໍ້ມູນ;

ເຈົ້າຂອງຂໍ້ມູນ ທີ່ສະເໜີຂໍຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຕາມມາດຕາ 5, ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້ ຕ້ອງເສຍຄ່າສະໜອງຂໍ້ມູນ ດັ່ງນີ້:

1. ສຳລັບບຸກຄົນ: 30.000 (ສາມສິບພັນ) ກີບ ຕໍ່ຄັ້ງຕໍ່ຂໍ້ມູນ;

2. ສຳລັບນິຕິບຸກຄົນ: 50.000 (ຫ້າສິບພັນ) ກີບ ຕໍ່ຄັ້ງຕໍ່ຂໍ້ມູນ.

ຜູ້ທີ່ບໍ່ແມ່ນເຈົ້າຂອງຂໍ້ມູນ ທີ່ສະເໜີຂໍຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ຕາມມາດຕາ 5, ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້ ຕ້ອງເສຍຄ່າສະໜອງຂໍ້ມູນ ດັ່ງນີ້:

1. ຂໍ້ມູນຂອງບຸກຄົນ: 50.000 (ຫ້າສິບພັນ) ກີບ ຕໍ່ຄັ້ງຕໍ່ຂໍ້ມູນ;

2. ຂໍ້ມູນຂອງນິຕິບຸກຄົນ: 100.000 (ໜຶ່ງແສນ) ກີບ ຕໍ່ຄັ້ງຕໍ່ຂໍ້ມູນ.

ຄ່າເຂົ້າຄົ້ນຫາ ແລະ ຄ່າສະໜອງ ຂໍ້ມູນ ມີການປ່ຽນແປງຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 8 ຄ່າບຳລຸງຮັກສາລະບົບ**

ສະມາຊິກ ຕ້ອງເສຍຄ່າບຳລຸງຮັກສາລະບົບ ດັ່ງນີ້:

1. ທະນາຄານທຸລະກິດ : 2.500.000 (ສອງລ້ານຫ້າແສນ) ກີບ ຕໍ່ປີ;

2. ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ແມ່ນປະຕິບັດຕາມປະເພດທຸລະກິດ ດັ່ງນີ້:

- ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ບໍລິສັດເຊົ່າສິນເຊື່ອ: 1.000.000 (ໜຶ່ງລ້ານ) ກີບ ຕໍ່ປີ;

- ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ: 500.000 (ຫ້າແສນ) ກີບ ຕໍ່ປີ;

ຄ່າບຳລຸງຮັກສາລະບົບ ມີການປ່ຽນແປງຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

## ໝວດທີ 3
## ວິທີການຊຳລະ

### ມາດຕາ 9 ການຊຳລະຄ່າສະໝັກເຂົ້າເປັນສະມາຊິກ

ການຊຳລະຄ່າສະໝັກເຂົ້າເປັນສະມາຊິກ ແມ່ນປະຕິບັດພາຍໃນ 7 ວັນ ລັດຖະການ ພາຍຫຼັງທີ່ໄດ້ຮັບໃບອະນຸຍາດເຂົ້າເປັນສະມາຊິກຈາກທະນາຄານແຫ່ງ ສປປ ລາວ. ວິທີການຊຳລະ ແມ່ນໂອນຄ່າສະໝັກເຂົ້າເປັນສະມາຊິກເຂົ້າບັນຊີຂອງສູນຂໍ້ມູນຂ່າວສານສິນເຊື່ອ ທີ່ເປີດຢູ່ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ.

### ມາດຕາ 10 ການຊຳລະຄ່າເຂົ້າຄົ້ນຫາ ແລະ ຄ່າສະໜອງ ຂໍ້ມູນ

ການຊຳລະຄ່າເຂົ້າຄົ້ນຫາຂໍ້ມູນ ແມ່ນຊຳລະເປັນເດືອນ ໂດຍບໍ່ໃຫ້ກາຍວັນທີ 5 ຂອງເດືອນຖັດໄປ. ວິທີການຊຳລະ ແມ່ນໂອນຄ່າເຂົ້າຄົ້ນຫາຂໍ້ມູນເຂົ້າບັນຊີຂອງສູນຂໍ້ມູນຂ່າວສານສິນເຊື່ອ ທີ່ເປີດໄວ້ຢູ່ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ. ກໍລະນີ ທີ່ສະມາຊິກບໍ່ສາມາດຊຳລະທັນຕາມກຳນົດເວລາ ແມ່ນປະຕິບັດດັ່ງນີ້:

1. ທະນາຄານທຸລະກິດ: ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ ຈະຕັດເອົາເງິນໃນບັນຊີເງິນຝາກກະແສລາຍວັນ ທີ່ທະນາຄານທຸລະກິດ ເປີດໄວ້ຢູ່ກົມດັ່ງກ່າວ;

2. ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ: ສູນຂໍ້ມູນຂ່າວສານສິນເຊື່ອ ຈະແຈ້ງການໃຫ້ເຂົ້າມາຊຳລະຄ່າເຂົ້າຄົ້ນຫາຂໍ້ມູນ ພາຍໃນ 5 ວັນ ລັດຖະການ.

ກໍລະນີ ທີ່ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ ບໍ່ປະຕິບັດຕາມແຈ້ງການຂອງສູນຂໍ້ມູນຂ່າວສານສິນເຊື່ອ ທີ່ກຳນົດໄວ້ໃນຂໍ້ 2 ຂອງມາດຕານີ້ ຫຼື ກໍລະນີ ທີ່ສະມາຊິກຊຳລະຊັກຊ້າເປັນອາຈິນ ຈະຖືກປະຕິບັດມາດຕະການຕໍ່ຜູ້ລະເມີດ ຕາມລະບຽບການກ່ຽວຂ້ອງ.

ການຊຳລະຄ່າສະໜອງຂໍ້ມູນ ແມ່ນປະຕິບັດບົນພື້ນຖານການສະໜອງຂໍ້ມູນຕົວຈິງໃນແຕ່ລະຄັ້ງ ໂດຍສາມາດຊຳລະຄ່າສະໜອງຂໍ້ມູນເປັນເງິນສົດ ທີ່ກົມເງິນຕາ ຫຼື ໂອນຄ່າສະໜອງຂໍ້ມູນເຂົ້າບັນຊີຂອງສູນຂໍ້ມູນຂ່າວສານສິນເຊື່ອ ທີ່ເປີດໄວ້ຢູ່ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ.

**ມາດຕາ 11 ການຊຳລະຄ່າບຳລຸງຮັກສາລະບົບ**

ການຊຳລະຄ່າບຳລຸງຮັກສາລະບົບ ແມ່ນຊຳລະເປັນປີ ໂດຍບໍ່ໃຫ້ກາຍວັນທີ 15 ເດືອນມັງກອນຂອງປີຖັດໄປ. ວິທີການຊຳລະ ແມ່ນໂອນຄ່າບຳລຸງຮັກສາລະບົບເຂົ້າບັນຊີຂອງສູນຂໍ້ມູນຂ່າວສານສິນເຊື່ອ ທີ່ເປີດໄວ້ຢູ່ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 12 ການຈັດຕັ້ງປະຕິບັດ**

ກົມບໍລິການທະນາຄານ, ກົມເງິນຕາ, ສູນຂໍ້ມູນຂ່າວສານສິນເຊື່ອ, ສະມາຊິກ, ເຈົ້າຂອງຂໍ້ມູນ ແລະ ຜູ້ທີ່ບໍ່ແມ່ນເຈົ້າຂອງຂໍ້ມູນ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 13 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍຄ່າສະມາຊິກ ແລະ ຄ່າບໍລິການຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 927/ທຫລ, ລົງວັນທີ 20 ກັນຍາ 2012.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

**ດຣ ສົມພາວ ໄຟສິດ**